Lao

# ແຜນຕໍ່ຕ້ານຢາເສບຕິດໃນຄາບຣາມາຕາ

ເຈັ້ຍເຜີຍແຜ່ຂໍ້ມູນ ■ ກັນຍາ (9) 2003

ໃນເດືອນ ມີນາ (3) 2001, ຣັຖບານໄດ້ປະກາດແຜນອັນຮັດກຸມທົ່ວທຸກດ້ານເປັນມູນຄ່າ $18.8 ລ້ານ ເພື່ອ ແກ້ບັນຫາຢາເສບຕິດ ແລະ ອາຊຍາກັມໃນເຂດຄາບຣາມາຕາ.

ແຜນຕໍ່ຕ້ານຢາເສບຕິດໃນຄາບຣາມາຕາ (Cabramatta Anti-Drug Strategy) ຮວມມີ:

- ເພີ້ມສິດອຳນາດແລະເພີ້ມກຳລັງພົນໃຫ້ຕຳຣວດໃນການປິດເຮືອນຢາ ແລະ ກວດລ້າງພວກຂາຍ ແລະ ພວກໃຊ້ ຢາເສບຕິດຕາມທ້ອງຖນົນ;
- ບັງຄັບໃຫ້ພວກຕິດຢາເສບຕິດໄປຮັບການປິ່ນປົວ ແລະ ເສີມຂຍາຍໂຄງການປິ່ນປົວ ແລະ ຟື້ນຟູສຸຂພາບ;
- ໂຄງການເບິ່ງແຍງບ້ານເມືອງ (CityWatch) ຊຶ່ງຕຳຣວດ ແລະ ຊຸມຊົນທ້ອງຖິ່ນເຮັດວຽກຮ່ວມກັນ ເພື່ອແກ້ໄຂບັນຫາອາຊຍາກັມໃນທ້ອງຖິ່ນ; ແລະ
- ເສີມຂຍາຍໂຄງການ ພົວພັນແລະປ້ອງກັນໃນຂັ້ນຕົ້ນຕ່າງໆ - ເຊັ່ນ ໂຄງການ ເກທເວຍ໌ (Gateways) ແລະ ທີມທ້ອງຖນົນຄາບຣາມາຕາ (Cabramatta Street Team).

ແຜນການ ແລະ ຄວາມຄິດລິເລີ້ມຕ່າງໆ ໄດ້ເລີ້ມຂຶ້ນເມື່ອວັນທີ 1 ກໍຣະກະດາ (7) 2001. ໃນເດືອນເມສາ (4) 2002 ທ່ານນາຍົກຣັຖໄດ້ສເນີລາຍງານຕໍ່ຣັຖສະພາເຖິງຄວາມກ້າວໜ້າຂອງໂຄງການຕ່າງໆນີ້ວ່າມີຜົນດີຢ່າງໜ້າພໍໃຈ.

ໃນຂະນະນີ້ ຄນະຣັຖບານ ນຊວ ໄດ້ໃຫ້ເງິນງົບປມານຕື່ມອີກ $9.3 ລ້ານ ເພື່ອສືບຕໍ່ແຜນຕໍ່ຕ້ານຢາເສບຕິດຕື່ມອີກສອງປີ - ເຖິງເດືອນກໍຣະກະດາ (7) 2007.

ເຈັ້ຍເຜີຍແຜ່ຂໍ້ມູນນີ້ ສລຸບຜົນຄວາມກ້າວໜ້າຂອງຄວາມຄິດລິເລີ້ມທັງຫລາຍຂອງແຜນຕໍ່ຕ້ານຢາເສບຕິດ.

## ສິດອຳນາດໃໝ່ ແລະ ເພີ້ມພົນກຳລັງໃຫ້ຕຳຣວດ

ສິດອຳນາດໃໝ່ ແລະ ພົນກຳລັງເພີ້ມໄດ້ຖືກນຳມາໃຊ້ພາຍໃຕ້ແຜນຕໍ່ຕ້ານຢາເສບຕິດໃນຄາບຣາມາຕາ.

ຕັ້ງແຕ່ ເດືອນມົກຣາ (1) 2001, ເຮືອນຢາຈຳນວນ 203 ຫລັງ **ໄດ້ຖືກປິດລົງ**, 143 ຫລັງໃນຈຳນວນນັ້ນ, ຮວມທັງ 35 ຫລັງໃນຄາບຣາມາຕາເອງ, **ໄດ້ຖືກປິດລົງດ້ວຍການໃຊ້** ກົດໝາຍໃໝ່ກ່ຽວກັບເຮືອນຢາ ຊຶ່ງໄດ້ອອກປະກາດໃຊ້ໃນວັນທີ 1 ກໍຣະກະດາ (7) 2001.

ເຂດບັງຄັບບັນຊາທ້ອງຖິ່ນຄາບຣາມາຕາ (Cabramatta Local Area Command) ໄດ້ຕັ້ງຂໍ້ຫາໃສ່ 99 ຄົນ (110 ຂໍ້ຫາ) ພາຍໃຕ້ກົດໝາຍເຮືອນຢາໃນລະຫວ່າງ ເດືອນກໍຣະກະດາ (7) 2001 ແລະ ເດືອນພຶສພາ (5) 2003. ໃນນີ້ ມີ:

- 76 ຂໍ້ຫາ ແມ່ນຢູ່ໃນຄາບຣາມາຕາ ວ່າ ຢູ່ໃນ, ເຂົ້າໄປ ຫລື ອອກຈາກເຮືອນຢາ
- 35 ຂໍ້ຫາ ໃນການຈັດຫາ, ທຳການຂາຍ ແລະ ອະນຸຍາດໃຫ້ໃຊ້ເຮືອນເປັນບ່ອນຂາຍຢາ

ມາເຖິງວັນທີ 31 ເດືອນພຶສພາ (5) 2003, ຄຳສັ່ງໃຫ້ "ຍ້າຍໄປຂ້າງໜ້າ" ໄດ້ຖືກນຳອອກໃຊ້ 4597 ເທື່ອ.

ໄດ້ມີ **ກຳລັງພົນຕຳຣວດ ເພີ້ມຂຶ້ນ:**

- ເຂດບັງຄັບບັນຊາທ້ອງຖິ່ນຄາບຣາມາຕາໄດ້ຖືກເລື່ອນຂັ້ນຂຶ້ນເປັນຂັ້ນ1 ຍ້ອນຖືກຮັບຮອງວ່າເປັນເຂດທີ່ມີຄວາມຫຍຸ້ງຍາກໃນການພິທັກສັນຕິ;
- ສະຖານີຕຳຣວດແຫ່ງໃໝ່ມູນຄ່າ $12.78 ລ້ານ ພວມຖືກສ້າງ ແລະ ຈະສຳເຣັດລົງໃນ ເດືອນກັນຍາ (9) 2003;
- ມີນັກສືບເຣື່ອງຢາເສບຕິດຕື່ມອີກ 10 ຄົນ; ແລະ
- ໜ່ວຍຕຳຣວດຣົຖຖີບ (Bicycle Squad) ໄດ້ເພີ້ມຈຳນວນຂຶ້ນຈາກ 6 ເປັນ 12.

## ນາຍພາສາ

ເຂດບັງຄັບບັນຊາທ້ອງຖິ່ນຄາບຣາມາຕາໃຊ້ບໍຣິການນາຍພາສາແບບໜ້າຕໍ່ໜ້າ ຂອງ ຄນະກັມມາທິການ ການສັມພັນລະຫວ່າງຊຸມຊົນທີ່ມີໄວ້ບໍຣິການຕລອດ 24 ຊົ່ວໂມງ. ຕັ້ງແຕ່ເດືອນກັນຍາ (9) 2002 ຫາເດືອນ ມິຖຸນາ (6) 2003 ພວກນາຍພາສາ ໄດ້ກອນເຖິງ 13 ພາສາ.

## ຄວາມຊຳນານທີ່ດີຂຶ້ນສຳລັບຕຳຣວດເພື່ອເຮັດວຽກກັບຊຸມຊົນ

ກົຣມຕຳຣວດ ຣັຖ ນຊວ ໄດ້ເປີດຫລັກສູດໃຫ້ເຈົ້າໜ້າທີ່ຂອງເຂດບັງຄັບບັນຊາຄາບຣາມາຕາ ໄດ້ຮັບການຮຽນ ເອົາໃບປະກາດພິເສດຈາກ TAFE. ນັບຕັ້ງແຕ່ການຮຽນ "ພາສາວຽດນາມ ໃນການພິທັກສັນຕິ" ໄດ້ເລີ້ມຂຶ້ນໃນ ເດືອນສິງຫາ (8) 2001, ເຈົ້າໜ້າທີ່ຈຳນວນ 60 ຄົນໄດ້ຮຽນຈົບຫລັກສູດນີ້ມາແລ້ວ. ຫລັກສູດນີ້ ຝຶກຝົນຕຳຣວດຄາບຣາມາຕາ ໃຫ້ຮຽນພາສາວຽດນາມຂັ້ນພື້ນຖານໃຫ້ພຽງພໍໃນການສົນທະນາແບບງ່າຍໆ ແລະ ຈົດບັນທຶກເອົາລາຍງານອາຊຍາກັມຕ່າງໆ. ພວກຕຳຣວດຍັງຖືກຝຶກຝົນໃຫ້ເຂົ້າໃຈເຣື່ອງວັທນະທັມແລະປວັດສາດຂອງວຽດນາມ ແລະ ວິທີເຮັດວຽກກັບນາຍພາສາ ອີກດ້ວຍ.

ຕື່ມຈາກນີ້, ພນັກງານຕ່າງໆຈຳນວນ 121 ຄົນ ໄດ້ຈົບຫລັກສູດແບບສັ້ນ ດ້ານຄວາມຮູ້ແລະຄວາມຊຳນານກ່ຽວກັບ ວັທນະທັມຕ່າງໆ. ນີ້ແມ່ນຮວມທັງ ຕຳຣວດໃນໜ້າທີ່ທົ່ວໄປ ແລະ ຕຳຣວດຣົຖຖີບ, ພວກນັກສືບ, ແລະ ພວກ ບໍຣິຫານທົ່ວໄປ ແລະ ພວກສະມາຊິກຂອງ Target Action Group (TAG) ແລະ ພວກ ທີມທ້ອງຖນົນ ຂອງ ກະຊວງ ບໍຣິການຊຸມຊົນ (Department of Community Services – DoCS).

Produced by the NSW Premier's Department.

ActNow NSW GOVERNMENT AND YOU
Taking a stand against drugs

**ສະຖິຕິ ການກໍ່ອາຊຍາກັມຕ່າງໆ**

ອີງຕາມຂໍ້ມູນຂອງຫ້ອງການສະຖິຕິແລະຄົ້ນຄວ້າເຣື່ອງອາຊຍາກັມແຫ່ງຣັຖ ນິວຊາວ (NSW Bureau of Crime Statistics and Research) ອາຊຍາກັມຕ່າງໆໃນເຂດຄາບຣາມາຕາ ໄດ້ມີການລົດລົງໃນ 7 ຂແນງໃຫຍ່ໆ ພາຍໃນລະຍະສອງປີ ມາເຖິງເດືອນທັນວາ (12) 2002:

- ການປຸ້ນຈີ້ໂດຍບໍ່ໃຊ້ອາວຸດ (ລົດລົງ 50%)
- ການປຸ້ນຈີ້ໂດຍໃຊ້ອາວຸດປືນ (ລົດລົງ 58%)
- ການປຸ້ນຈີ້ໂດຍໃຊ້ອາວຸດນອກເຫນືອຈາກປືນ (ລົດລົງ 63%)
- ການງັດເຂົ້າເຮືອນ (ລົດລົງ 26%)
- ການງັດເຂົ້າສະຖານທີ່ຕ່າງໆ (ລົດລົງ 39%)
- ການລັກຣົຖ (ລົດລົງ 29%)
- ການລັກເອົາສິ່ງຂອງຈາກຣົຖ (ລົດລົງ 23%)

ຂໍ້ມູນອື່ນໆກໍຍັງຊີ້ບອກເຖິງການລົດລົງໃນການໃຊ້ຢາເສບຕິດໃນຄາບຣາມາຕາ:

- ຈຳນວນຫລອດເຂັມສັກຢາທີ່ພວກຫ້ອງການຊຸມຊົນໄດ້ແຈກຢາຍໃຫ້ພວກໃຊ້ຢາເສບຕິດກໍໄດ້ລົດລົງຈາກຈຳນວນ 110,463 ອັນໃນລະຍະຈາກເດືອນກໍຣະກະດາ (7) ຫາ ເດືອນທັນວາ (12) 2001 ມາເປັນຈຳນວນ 42,235 ອັນ ພາຍໃນລະຍະ 6 ເດືອນ ຈາກວັນທີ 1 ມົກຣາ (1) ຫາ ວັນທີ 30 ມິຖຸນາ (6) 2003.
- ການເອີ້ນຣົຖໂຮງຫມໍມາເອົາຄົນໃຊ້ຢາເສບຕິດເກີນຂນາດ ໄດ້ລົດລົງຈາກຈຳນວນ 385 ຄັ້ງ ໃນລະຍະຈາກເດືອນກໍຣະກະດາ (7) ຫາ ເດືອນທັນວາ (12) 2000 ມາເປັນ 24 ຄັ້ງ ໃນລະຍະຈາກວັນທີ 1 ມົກຣາ (1) ຫາ ວັນທີ 30 ມິຖຸນາ (6) 2003; ແລະ
- ຈຳນວນຄົນຕາຍຍ້ອນຢາເສບຕິດກໍໄດ້ລົດລົງຈາກ 24 ຄົນ ໃນລະຍະຈາກ ເດືອນກໍຣະກະດາ (7) ຫາ ເດືອນ ທັນວາ (12) 2000 ມາເປັນ 8 ຄົນ ໃນລະຍະເວລາດຽວກັນໃນປີ 2002.

## CityWatch

CityWatch ນຳພາໃຫ້ຕຳຣວດທ້ອງຖິ່ນ ນັກທຸຣະກິດ ແລະ ຊຸມຊົນພ້ອມໃຈກັນພັທນາການຮັບມືກັບອາຊຍາກັມ ໃນທ້ອງຖິ່ນ. ຄນະກັມມະການ CityWatch ໄດ້ຖືກຈັດຕັ້ງຂຶ້ນໃນເດືອນກໍຣະກະດາ (7) 2001 ແລະ ພົບພໍ້ກັນ ທຸກໆສອງເດືອນ.

ຜູ້ນຳຂອງຄນະກັມມະການນີ້ແມ່ນ ຜູ້ບັງຄັບບັນຊາການຕຳຣວດທ້ອງຖິ່ນ ແລະ ກັມມາທິການ ສັມພັນລະຫວ່າງຊຸມຊົນ ເປັນຜູ້ຈັດແລະຊ່ວຍໃນວຽກການຂອງຄນະກັມມະການນີ້. ພວກສະມາຊິກທັ້ງຫລາຍຮວມມີ ສະມາຊິກສະພາຜູ້ແທນ ຣາສດອນເຂດຄາບຣາມາຕາ, ເຈົ້າເມືອງ ເມືອງແຟຣ໌ຟຽວດ໌, ຜູ້ຕາງຫນ້າຈາກຫໍການຄ້າຄາບຣາມາຕາ ແລະ ແຄນເລເວລ, ສະມາຄົມພໍ່ຄ້າຄາບຣາມາຕາ, ກຸ່ມຊຸມຊົນ ແລະ ຫ້ອງການຣັຖບານຕ່າງໆ.

ວິທີບາງຢ່າງທີ່ຄນະກັມມະການ CityWatch ເຮັດວຽກຮ່ວມກັບ ປະຊາຊົນເພື່ອໃຫ້ແນ່ໃຈວ່າມີການແລກປ່ຽນຂໍ້ມູນ ແລະ ແນວຄິດຕ່າງໆລະຫວ່າງຕຳຣວດ ແລະ ຊຸມຊົນ ຮວມມີ:

- ຫນັງສືວາຣະສານເປັນປະຈຳ
- ການສົນທະນາທີ່ໃຫ້ຄວາມຮູ້
- ການສຳຣວດຕາມເຮືອນ
- ຈັດຕັ້ງກຸ່ມເຊື່ອມສັມພັນ
- ໃຫ້ຂໍ້ມູນກ່ຽວກັບເວັບໄຊດ໌ຂອງ CityWatch

ໃນເດືອນເມສາ (4) 2003, CityWatch ໄດ້ຖືກຮັບຮູ້ວ່າເປັນຄນະຮັບຜິດຊອບຕຳຣວດແລະຊຸມຊົນ (Police Accountability Community Team – PACT) ສຳລັບເຂດບັງຄັບບັນຊາທ້ອງຖິ່ນຄາບຣາມາຕາ.

ການປະຊຸມລະຫວ່າງຕຳຣວດແລະຊຸມຊົນໄດ້ຖືກຈັດຂຶ້ນໃນວັນທີ 3 ເມສາ (4) 2003 ແລະ ໄດ້ມີຄຳແນະນຳຫລາຍຢ່າງກ່ຽວກັບເຣື່ອງໂສເພນີ, ການຈັດການກັບບັນຫາຢາເສບຕິດ, ການລັກຂອງແລະປຸ້ນຈີ້, ອາຊຍາກັມທີ່ຖືກປົກປິດ, ການໃຫ້ບໍຣິການຂອງຕຳຣວດ ແລະ ການປັບປຸງພາບພົດ ແລະ ການຊັກຈູງນັກທ່ອງທ່ຽວມາສູ່ຄາບຣາມາຕາ.

ການສຳຣວດເຣື່ອງການຄ້າກໍໄດ້ດຳເນີນມາເຖິງດຽວນີ້ ດ້ວຍການໄດ້ສຳຣວດ189 ຮ້ານຄ້າໃນເຂດການຄ້າ ຄາບຣາມາຕາ.

ລາຍລະອຽດ ແລະ ຫນັງສືຕ່າງໆ ມີໄວ້ໃຫ້ທີ່ເວັບໄຊດ໌ຂອງ ຄນະກັມມາທິການ ສັມພັນລະຫວ່າງຊຸມຊົນ ທີ່: www.crc.nsw.gov.au

## ການປິ່ນປົວ (ການປິ່ນປົວ ແລະ ການຟື້ນຟູສຸຂພາບ)

**ໂຄງການ Police Drug Bail (ການປະກັນຕົວຈາກຢາເສບຕິດຂອງຕຳຣວດ)** ແລະ **Magistrates Early Referral into Treatment – MERIT (ຜູ້ພິພາກສາສົ່ງໄປປິ່ນປົວແຕ່ຕົ້ນ)** ໄດ້ເປີດເຮັດວຽກຢູ່ ຄາບຣາມາຕາ ຕັ້ງແຕ່ເດືອນກໍຣະກະດາ (7) 2001. ໂຄງການເຫລົ່ານີ້ ສົ່ງຜູ້ຕ້ອງໂທດທີ່ມີບັນຫາຢາເສບຕິດໄປຫາບໍຣິການ ການປິ່ນປົວ ແລະ ການຟື້ນຟູສຸຂພາບ ເພື່ອປ້ອງກັນການກໍ່ອາຊຍາກັມທີ່ພົວພັນກັບຢາເສບຕິດໃນອະນາຄົດອີກ ແລະ ເພື່ອປັບປຸງສຸຂພາບແລະຄວາມຢູ່ດີຂອງສ່ວນບຸກຄົນອີກດ້ວຍ.

- ນັບຮອດວັນທີ 30 ມິຖຸນາ (6) 2003 ແລະ ການເຮັດວຽກຮ່ວມກັບສານ ລິເວີພູລ, ຜູ້ຕ້ອງໂທດ 180 ຄົນ ໄດ້ຖືກຮັບເຂົ້າໄປໃນໂຄງການ MERIT, ໃນຈຳນວນນັ້ນມີ 65 ຄົນ ມາຈາກເຂດຄາບຣາມາຕາ, ຜູ້ຕ້ອງໂທດ 89 ຄົນ ໄດ້ສຳເຣັດຈາກໂຄງການ MERIT ຊຶ່ງໃນຈຳນວນນັ້ນມີ 30 ຄົນມາຈາກຄາບຣາມາຕາ. ໃນທ້າຍສຸດ, ຜູ້ຕ້ອງໂທດ 23 ຄົນ ຍັງຢູ່ໃນໂຄງການນີ້ ແລະ ໃນຈຳນວນນີ້ ມີ 5 ຄົນມາຈາກຄາບຣາມາຕາ.
- ນັບຮອດວັນທີ 30 ມິຖຸນາ (6) 2003, ຜູ້ຕ້ອງໂທດ 29 ຄົນ ໄດ້ຖືກຕຳຣວດສັ່ງໃຫ້ໄປຮັບການປິ່ນປົວຢາເສບຕິດ ແລະ ຖືເປັນເງື່ອນໄຂໃນການປະກັນຕົວຢ່າງນຶ່ງ.
- ນັບຮອດວັນທີ 31 ເດືອນພຶສພາ (5) 2003, ຜູ້ຕ້ອງໂທດ 761 ຄົນໄດ້ຖືກປະກັນຕົວຈາກຕຳຣວດ ບໍ່ໃຫ້ກັບມາ ຄາບຣາມາຕາອີກ.

**ສູນກາງ ບໍຣິການ ການປະເມີນອາການ** ໄດ້ຖືກຕັ້ງຂຶ້ນເພື່ອປະສານງານດ້ານການປະເມີນເບິ່ງອາການ ແລະ ການແນະນຳສົ່ງ ພວກຄົນທີ່ຕ້ອງການບໍຣິການການປິ່ນປົວຢາເສບຕິດທັງຫລາຍ. ມາເຖິງວັນທີ 30 ມິຖຸນາ (6) 2003, ການປະເມີນຈຳນວນທັງຫມົດ 62 ຄົນ ໄດ້ຈົບລົງຮວມທັງ 25 ຄົນ ຈາກຈຳນວນ 29 ຄົນ ຖືກແນະນຳສົ່ງພາຍໃຕ້ໂຄງການ ການປະກັນຕົວ ຈາກຢາເສບຕິດຂອງຕຳຣວດ ແລະ 37 ຄົນຈາກຈຳນວນ 50 ຄົນ ທີ່ໄດ້ຮັບຈາກແນະນຳ ສົ່ງພາຍໃຕ້ກົດຫມາຍວ່າດ້ວຍ ຄົນມຶນເມົາ *(Intoxicated Persons Act)*.

**ບໍຣິການ ຮັກສາ ສຸຂພາບຈິດ** ໄດ້ຖືກຂຍາຍອອກຕື່ມອີກສຳລັບຜູ້ທີ່ມີບັນຫາດ້ານຢາເສບຕິດ ແລະ ສຸຂພາບຈິດ ທັງຫລາຍ. ຈາກເດືອນຕຸລາ (10) 2001 ຫາ ເດືອນມິຖຸນາ (6) 2003 ໄດ້ມີການແນະນຳສົ່ງມາຫາບໍຣິການນີ້ 265 ຄົນ ແລະ ການປະເມີນເບິ່ງແຕ່ລະຄົນກໍໄດ້ຈົບລົງ.

**ບ່ອນສຳລັບປິ່ນປົວຢາເສບຕິດ** ກໍມີເພີ້ມຂຶ້ນເປັນ 100 ບ່ອນທີ່ໂຮງຫມໍລິເວີພູລ ເພື່ອໃຫ້ພຽງພໍກັບຄວາມຕ້ອງການ ຂອງທ້ອງຖິ່ນ. ຣັຖບານ

ສືບຕໍ່ເຮັດວຽກຮ່ວມກັບເທສບານເມືອງແຟຣ໌ຟຽວດ໌ ເພື່ອຕັ້ງສະຖານທີ່ໃຫ້ບໍລິການ ການປິ່ນປົວແຫ່ງໃຫມ່ ທີ່ ເວເທີຣີລ ພາຣ໌ກ. ສະຖານທີ່ໃຫມ່ແຫ່ງນີ້ຈະແຈກຈ່າຍຢາໃຫ້ຄົນຕິດຢາໄດ້ເຖິງ 300 ຄົນ.

**Salvation Army's Follow-on Youth Recovery Support Team Fairfield – FYRST (ທີມຕິດຕາມໃຫ້ຄວາມຊ່ວຍເຫລືອຊາວຫນຸ່ມພວມພັກຟື້ນ ເຂດແຟຣ໌ຟຽວດ໌ ຂອງ ຊາລເວເຊິນ ອາຣ໌ມີ)** ໄດ້ໃຫ້ບໍຣການ ການເບິ່ງແຍງແກ່ພວກຊາວຫນຸ່ມທີ່ພວມຢູ່ໃນລະຫວ່າງການພັກຟື້ນຈາກໃຊ້ຢາເສບຕິດ ມາຕັ້ງແຕ່ເດືອນກຸມພາ (2) 2001. ໃນເດືອນຕຸລາ (10) 2002, ໄດ້ມີເງິນທຶນໃຫ້ຕື່ມແກ່ FYRST ພາຍໃຕ້ແຜນຕໍ່ຕ້ານຢາເສບຕິດໃນ ຄາບຣາມາຕາ ເພື່ອສືບຕໍ່ການໃຫ້ບໍຣິການນີ້ຕໍ່ໄປ. ຈາກເດືອນຕຸລາ (10) 2002 ຫາ ທ້າຍເດືອນມິຖຸນາ (6) 2003, ຄົນຕິດຢາ 97 ຄົນ ໄດ້ຖືກເບິ່ງແຍງໂດຍ FYRST.

## ບ່ອນຢູ່ສຸກເສີນ

ການໃຫ້ບໍຣິການບ່ອນຢູ່ທີ່ຫມັ້ນຄົງ ໄດ້ຊ່ວຍໃຫ້ຄົນສືບຕໍ່ການຮຽນຂອງພວກເຂົາ, ໃຫ້ພວກເຂົາເຮັດວຽກຕໍ່ໄດ້ ແລະ ຕັ້ງຊີວິດໃນເສັ້ນທາງເດີນອັນໃຫມ່.

ໂຄງການ ເຮືອນຊຸມຊົນ ຮູມ (Hume Community Housing) ຊຶ່ງໄດ້ເງິນທຶນຈາກ ກະຊວງ ເຄຫະສະຖານ (Department of Housing) ເພື່ອຈັດໃຫ້ມີບ່ອນຢູ່ສຸກເສີນເພີ່ມຂຶ້ນຕື່ມ - ເຮືອນເຊົ່າລະຍະສັ້ນ 40 ແຫ່ງ ແລະ ເຮືອນເຊົ່າລະຍະຍາວ 10 ແຫ່ງ - ໃນຄາບຣາມາຕາ ແລະ ເຂດອ້ອມແອ້ມ.

ທີມຊາວຫນຸ່ມ ຂອງ ສູນກາງຊຸມຊົນຄາບຣາມາຕາ (Cabramatta Community Centre Youth Team) ເປັນຜູ້ໃຫ້ເງິນໃນການໃສ່ເຄື່ອງເຮືອນທີ່ຈຳເປັນດ້ວຍເງິນຈາກ ກະຊວງ ບໍຣິການຊຸມຊົນ. ນອກຈາກນີ້ ທີມນີ້ ຍັງໄດ້ ຕັ້ງຝຶກອົບຮົມເຮັດວຽກຢູ່ "ເຮືອນສຸກເສີນ" ສຳລັບຄົນມຶນເມົາ ຊຶ່ງກໍໄດ້ຮັບທຶນຈາກກະຊວງ ເຄຫະສະຖານ. ມາຮອດ ທ້າຍເດືອນມິຖຸນາ (6) 2003 :

- 42 ຄົນ ໄດ້ຖືກຈັດຫາບ່ອນຢູ່ໃຫ້ໃນ 34 ເຮືອນຢູ່ - 35 ຄົນໃນຈຳນວນນີ້ ມີອາຍຸລະຫວ່າງ 18 ແລະ 24 ປີ ແລະ ມີເດັກ 7 ຄົນ
- 53 ຄົນ ເຄີຍໄດ້ຢູ່ເຮືອນມາແລ້ວ ຈາກ 4 ອາທິດ ຫາ 9 ເດືອນ; ແລະ
- 5 ຄົນ ທີ່ເຊົ່າແບບລະຍະຍາວກໍໄດ້ເລີ້ມເຂົ້າຢູ່ແລ້ວ.

## ການນຳຄົນຕິດຢາເສບຕິດ ແລະ ຕິດເຫລົ້າທີ່ຂາດທີ່ຢູ່ອາສັຍເຂົ້າໄປໃຊ້ບໍຣິການຕ່າງໆ

*ກົດຫມາຍວ່າດ້ວຍ ຄົນມຶນເມົາ 1979 (Intoxicated Persons Act 1979)* ອະນຸມັດໃຫ້ຕຳຣວດມີສິດກັກຕົວ ຄົນມຶນເມົາ ທີ່ຖືກພົບເຫັນຢູ່ຕາມສະຖານທີ່ສາທາຣະນະທັງຫລາຍ ແລະ ຜູ້ທີ່ອາດຈະເປັນອັນຕຣາຍແກ່ຕົວເອງ ຫລື ຜູ້ອື່ນ. ຫລັງຈາກນັ້ນ ພວກເຂົາເຈົ້າກໍຈະຖືກປ່ອຍໃຫ້ກັບໄປຫາຄອບຄົວ ຫລື ສົ່ງໄປຮັບການປິ່ນປົວ, ຫາທີ່ຢູ່ອາສັຍ ໃຫ້ ແລະ ສົ່ງໄປຫາບໍຣິການອື່ນໆ.

ທົ່ວຣັຖ ນຊວ, ຕຳຣວດ, ສາທາຣະນະສຸກແຫ່ງຣັຖ ນຊວ ແລະ ກະຊວງ ບໍຣິການຊຸມຊົນ ໄດ້ຮ່ວມກັນວາງຂັ້ນຕອນ ເພື່ອຊ່ວຍໃຫ້ຕຳຣວດໄດ້ສົ່ງຄົນມຶນເມົາໃຫ້ໄປໃຊ້ບໍຣິການທີ່ເຫມາະສົມ. ຂັ້ນຕອນການສົ່ງຄົນມຶນເມົາໃນເຂດທ້ອງຖິ່ນ ຄາບຣາມາຕາ *(Cabramatta Intoxicated Persons Local Protocol)* ໄດ້ຖືກນຳມາໃຊ້ໃນວັນທີ 1 ກໍຣະກະດາ (7) 2001 ເພື່ອໃຫ້ສອດຄ່ອງກັບ ແຜນຕໍ່ຕ້ານຢາເສບຕິດ.

ຮອດວັນທີ 30 ເດືອນ ມິຖຸນາ (6) 2003:

- 50 ຄົນ ໄດ້ຖືກສົ່ງພາຍໃຕ້ຂັ້ນຕອນດັ່ງກ່າວໄປຫາບໍຣິການການປິ່ນປົວສຂພາບ ເພື່ອໃຫ້ໄດ້ຮັບການປະເມີນເບິ່ງອັນຕຣາຍດ້ານສຸຂພາບໃນທັນທີ; ແລະ
- 32 ຄົນ ໄດ້ຖືກຮັບເຂົ້າຢູ່ເຮືອນເປັນເວລາ 43 ຄືນ ຊຶ່ງຈັດໃຫ້ໂດຍທີມທ້ອງຖິ່ນຄາບຣາມາຕາ ເຮືອນນີ້ແມ່ນ ຈັດໄວ້ສຳລັບຂັ້ນຕອນນີ້ໂດຍສະເພາະ.

## ການພົວພັນຂັ້ນຕົ້ນ ແລະ ການປ້ອງກັນ

ຈາກວັນທີ 1 ກໍຣະກະດາ (7) 2001 ທີມທ້ອງຖິ່ນ ຂອງ ກະຊວງບໍຣິການຊຸມຊົນ ໄດ້ຊ່ວຍພວກຊາວຫນຸ່ມຂາດທີ່ຢູ່ອາສັຍແລະຕິດຢາເສບຕິດໃຫ້ໄດ້ເຮືອນເຊົ່າ ແລະ ເຂົ້າຫາບໍຣິການປິ່ນປົວເຫລົ້າແລະຢາເສບຕິດ. ບໍຣິການນີ້ແມ່ນຢູ່ທີ່ສະຖານີຕຳຣວດຄາບຣາມາຕາ ແລະ ເປີດໃຫ້ບໍຣິການເຈັດມື້ຕໍ່ອາທິດ.

ຮອດວັນທີ 30 ເດືອນ ມິຖຸນາ (6) 2003 ທີມທ້ອງຖິ່ນ ໄດ້:

- ຕິດຕໍ່ 1,136 ຄົນ ເປັນ 2,660 ເທື່ອ;
- ຮັບການແນະນຳສົ່ງມາຈາກຕຳຣວດທ້ອງຖິ່ນ 564 ຄົນ ແລະ
- ແນະນຳສົ່ງ 1,158 ຄົນ ໄປຫາທີ່ຢູ່ອາສັຍ, ບໍຣິການຢາເສບຕິດແລະເຫລົ້າ ແລະ ບໍຣິການອື່ນໆ.

## ຊ່ວຍຄອບຄົວໃຫ້ຮັບມືກັບເຣື່ອງຢາເສບຕິດ

ໂຄງການ ກ້າວໄປຂ້າງຫນ້າ ຂອງ ຢູໄນຕິງແຄຣ໌ເບີນຊາຍດ໌ (Uniting*Care* Burnside's *Moving Forward*) ໃຫ້ການອູ້ມຊູແກ່ຄອບຄົວທຸກໆດ້ານຢ່າງເຕັມທີ່, ໃຫ້ຄຳປຶກສາແລະໃຫ້ໄດ້ຮັບການປິ່ນປົວເຣື່ອງຢາເສບຕິດ ແລະ ບໍຣິການອື່ນໆຊຶ່ງອາດຕ້ອງການ.

ນັບແຕ່ໂຄງການນີ້ໄດ້ເລີ້ມຕົ້ນມາແຕ່ເດືອນ ຕຸລາ (10) 2001 ມາເຖິງວັນທີ 30 ມິຖຸນາ (6) 2003:

- 104 ຄອບຄົວໄດ້ຖືກສົ່ງໄປຫາໂຄງການ ກ້າວໄປຂ້າງຫນ້າ;
- ໄດ້ໃຫ້ການຊ່ວຍເຫລືອແກ່ 73 ຄອບຄົວທີ່ພົວພັນກັບຄົນໃຊ້ຢາເສບຕິດ 68 ຄົນ, ຊາວຫນຸ່ມທີ່ມີຄວາມສ່ຽງ 18 ຄົນ ແລະ ພວກພໍ່ແມ່ຂອງຜູ້ບໍ່ໃຊ້ຢາເສບຕິດ, ເດັກ ແລະ ສະມາຊິກຄອບຄົວຄົນອື່ນໆອີກ105 ຄົນ.

ກະຊວງ ບໍຣິການຊຸມຊົນ ໄດ້ໃຫ້ທຶນສຳລັບໂຄງການນີ້.

## ເຊື່ອມຄອບຄົວເຂົ້າກັບໂຮງຮຽນ ແລະ ຊຸມຊົນ ທັງຫລາຍ

### *ໂຄງການ Gateways*

**ໂຄງການ Gateways** ໄດ້ເລີ້ມຂຶ້ນເມື່ອເດືອນກໍຣະກະດາ (7) 2001 ໃນເຂດຄາບຣາມາຕາ/ແຟຣ໌ຟຽວດ໌. ໂຄງ ການນີ້ໃຫ້ຄວາມຊ່ວຍເຫລືອແກ່ພວກນັກຮຽນທີ່ອາດເຂົ້າໄປກ່ຽວຂ້ອງກັບຢາເສບຕິດ ຫລື ຮຽນບໍ່ຈົບປີ 12. ມາຮອດເດືອນມິຖຸນາ (6) 2003.

- ນັກຮຽນ 519 ຄົນ ໄດ້ຮັບການຊ່ວຍເຫລືອແບບຕົວຕໍ່ຕົວ;
- ນັກຮຽນ 150 ຄົນ ໄດ້ຮຽນຈົບວິຊາຊີບຈາກ TAFE;
- ນັກຮຽນ 96 ຄົນ ໄດ້ຈົບຈາກການຝຶກຫັດດ້ານຕ້ອນຮັບແຂກໂດຍຜ່ານ ໂຄງການ "ກາເຟ ຂອບຟ້າ" ຂອງ Salvation Army's Café Horizons; ແລະ
- ນັກຮຽນ 320 ຄົນ ໄດ້ມີຄົນຊ່ວຍຂຽນແຜນການສຶກສາໃຫ້ເປັນການສ່ວນຕົວ.

ໂຮງຮຽນມັທຍົມຫລາຍແຫ່ງໃນເຂດແຟຣ໌ຟຽວດ໌ໄດ້ເລີ້ມນຳໃຊ້ແຜນການຂັ້ນຕອນ ເພື່ອໃຫ້ເຫມາະສົມກັບການສຶກສາ ເຣື່ອງຢາເສບຕິດສຳລັບນັກຮຽນຊັ້ນປີ 7-10.

### *Schools as Community Centres ແລະ Primary Connect*

ໂຮງຮຽນທັງຫລາຍສາມາດໃຊ້ເປັນບ່ອນທີ່ດີຍິ່ງ ໃນການສ້າງຄວາມສັມພັນອັນດີງາມ ລະຫວ່າງເດັກ ແລະ ພວກຄົນຫນຸ່ມ, ກັບຄອບຄົວເຂົາເຈົ້າ ແລະ ກັບຊຸມຊົນທີ່ພວກເຂົາເຈົ້າຢູ່ນຳ.

**Families First 'Schools as Community Centres' ("ໂຮງຮຽນ ເປັນ ສູນກາງຂອງຊຸມຊົນ" ຂອງ ໂຄງການ ຄອບຄົວມາກ່ອນ)** ໃຫ້ການອູ້ມຊູແກ່ຄອບຄົວທີ່ມີລູກອາຍຸຕ່ຳກວ່າ 8 ປີທີ່ຢູ່ໃນໂຮງຮຽນໃນເຂດ ຄາບຣາມາຕາ, ແຄນລີເວລ໌, ບອນນີຣິກ ແລະ ແຟຣ໌ຟຽວດ໌.

ໃນແຕ່ລະໂຮງຮຽນເຫລົ່ານີ້ ມີຜູ້ປະສານງານຄົນນຶ່ງເປັນຜູ້ເຮັດວຽກກັບໂຄງການນີ້.

ຢູ່ແຟຣ໌ຟຽວດ໌, ກຸ່ມຫລິ້ນ, ໂຄງການຟ້ອນຣໍາຂອງຊຸມຊົນ ແລະ ໂຄງການສິລປະຊຸມຊົນ ໄດ້ສ້າງສາຍສັມພັນລະຫວ່າງ ເຮືອນ, ໂຮງຮຽນ ແລະ ຊຸມຊົນ. ຢູ່ຄາບຣາມາຕາ ໄດ້ຈັດກຸ່ມສົນທະນາ 87 ຄັ້ງ ໃຫ້ແກ່ພວກພໍ່ແມ່ ແລະ ໄດ້ທໍາການຕິດຕໍ່ກັບຄອບຄົວ 1,539 ຄັ້ງ ພາຍໃນປີນັ້ນ. ຢູ່ແຄມລີເວລ, ໄດ້ຈັດໃຫ້ມີການປະຊຸມ, ກຸ່ມຫລິ້ນ ແລະ ກຸ່ມສົນທະນາໃຫ້ຂໍ້ມູນສໍາລັບພວກພໍ່ແມ່ເພື່ອໃຫ້ມີການຮ່ວມມືລະຫວ່າງຊຸມຊົນແລະໂຮງຮຽນຢ່າງໃກ້ຊິດຂຶ້ນ. ຢູ່ບອນນີຣິກ, ໄດ້ມີການຕິດຕໍ່ກັບຊຸມຊົນຊາວອາບໍຣິຈິໂນລ.

ໂຄງການ *Schools as Community Centres* ໄດ້ຮັບການສົ່ງເສີມຈາກໂຄງການ Primary Connect.

ໂຄງການ **ການເຊື່ອມຕໍ່ຂັ້ນປະຖົມ** ໃຫ້ການອູ້ມຊູແກ່ເດັກອາຍຸລະຫວ່າງ 5-12 ປີ ທີ່ມີຄວາມອ່ອນແອ ແລະ ແກ່ຄອບຄົວເຂົາເຈົ້າ, ໂດຍສະເພາະພວກເດັກທີ່ມີຄວາມສ່ຽງຕໍ່ການອອກໂຮງຮຽນໄວ, ໃຊ້ຢາເສບຕິດ, ມີຄວາມປະພຶດທີ່ມັກຝ່າຝືນ ແລະ ທໍາຮ້າຍຕົວເອງ. ການຮູ້ບັນຫາ ແລະ ແກ້ໄຂແຕ່ຕົ້ນໆ ຈະສາມາດຢຸດຢັ້ງບໍ່ໃຫ້ເກີດຄວາມຫຍຸ້ງຍາກຈົນແກ້ບໍ່ໄດ້.

ຜູ້ປະສານງານຂອງໂຄງການ ການເຊື່ອມຕໍ່ຂັ້ນປະຖົມ ໄດ້ຮ່ວມມືກັບບໍຣິການຕ່າງໆໃນທ້ອງຖິ່ນ ເຊັ່ນ ອານາມັຍຊຸມຊົນ, Burnside ແລະ Karitane ເພື່ອຈັດ:

- ສັມມະນາເຣື່ອງຢາເສບຕິດ ສໍາລັບພວກພໍ່ແມ່ແລະຄອບຄົວຊາວວຽດນາມ ຊຶ່ງມີຄົນເຂົ້າຮ່ວມປະມານ 200 ຄົນ;
- ສັມມະນາເຣື່ອງການເວົ້າລົມລະຫວ່າງພວກພໍ່ແມ່ ແລະ ລູກໆພາຍໃນຄອບຄົວຊາວວຽດນາມ ຊຶ່ງຈັດຂຶ້ນທີ່ ຄລັບ ຂອງຕໍາຣວດ, ຊຸມຊົນ ແລະ ຊາວໜຸ່ມ ທີ່ຄາບຣາມາຕາ.

## ໂຄງການ ການສຶກສາເຣື່ອງຢາເສບຕິດນາໆວັທນະທັມ

ກະຊວງນາຍົກ (Premier's Department) ໄດ້ເຮັດວຽກຮ່ວມກັບຫ້ອງການ ແລະ ກຸ່ມຊຸມຊົນໃຫ້ຄໍາປຶກສາຕ່າງໆໃນທ້ອງຖິ່ນເພື່ອສ້າງໂຄງການສຶກສາ ແລະ ຂໍ້ມູນກ່ຽວກັບຢາເສບຕິດສໍາລັບພວກຄອບຄົວໃນຊຸມຊົນ ວຽດນາມ, ຂແມນ, ລາວ ແລະ ຈີນ.

ແຕ່ລະຊຸມຊົນໄດ້ໃຊ້ຫລາຍວິທີທາງເພື່ອພົວພັນກັບພວກພໍ່ແມ່ ແລະ ສົ່ງຂໍ້ຄວາມໄປໃຫ້ທົ່ວເຖິງ - ເຊັ່ນ ຣາຍການ ວິທຍຸ, ບົດຄວາມໃນໜັງສືພິມ, ສັມມະນາໃຫ້ຂໍ້ມູນແກ່ພວກພໍ່ແມ່ ແລະ ເທັບຟັງ.

ສາຍໂທຣະສັບໃຫ້ການຊ່ວຍເຫລືອສໍາລັບຊຸມຊົນວຽດນາມ ໄດ້ຮັບການຂໍຄວາມຊ່ວຍເຫລືອ 269 ຄັ້ງ ໃນລະຫວ່າງ ເດືອນສິງຫາ (8) 2002 ຫາ ເດືອນເມສາ (4) 2003. ເທັບວີດີໂອໃຫ້ການສຶກສາສໍາລັບພໍ່ແມ່ຊາວວຽດນາມ ໄດ້ຖືກຜລິດຂຶ້ນດ້ວຍເງິນທຶນຈາກກະຊວງ ບໍຣິການຊຸມຊົນ ແລະ ກະຊວງນາຍົກ.

ຫ້ອງສມຸດ ຂອງ ເທສບານເມືອງແຟຣ໌ຟຽວດ໌ ໄດ້ຂຍາຍການເກັບກໍາໜັງສື ເພື່ອຮວມເອົາຂໍ້ມູນເຣື່ອງຢາເສບຕິດ ແລະ ເຫລົ້າ ໃນພາສາວຽດນາມ, ຂແມນ, ລາວ ແລະ ຈີນ.

## ບໍຣິການທີ່ດີຂຶ້ນ ເພື່ອ ຕອບສນອງຕໍ່ພວກຊາວໜຸ່ມ

ເທສບານເມືອງ ແຟຣ໌ຟຽວດ໌ ແລະ ກະຊວງນາຍົກ ໄດ້ເປັນປະທານຮ່ວມ ຂອງ ທີມ ບົດບາດຊາວໜຸ່ມ (Youth Action Team) ຂອງຫ້ອງການຕ່າງໆຂອງຣັຖບານແລະ ບໍ່ແມ່ນຣັຖບານທີ່ເລີ້ມຂຶ້ນໃນເດືອນ ກໍຣະກະດາ (7) 2001. ທີມນີ້ ເຮັດວຽກເພື່ອຫາວິທີປັບປຸງການໃຫ້ບໍຣິການຕ່າງໆແກ່ຊາວໜຸ່ມໃນເຂດນີ້ໃຫ້ດີຂຶ້ນ.

ນັບຕັ້ງແຕ່ປີ 2002 ມາ, ກຸ່ມນີ້ໄດ້ເຮັດວຽກຮ່ວມກັນເພື່ອປັບປຸງການແນະນໍາສົ່ງ ແລະ ວິທີເບິ່ງແຍງແຕ່ລະກໍຣະນີ, ການຊ່ວຍເຫລືອພວກຊາວໜຸ່ມທີ່ຂາດທີ່ພັກອາສັຍ ແລະ ຄວາມສັມພັນລະຫວ່າງຕໍາຣວດ ແລະ ຊາວໜຸ່ມ.

## ການຂຍາຍໂຄງການ ເກັບເຂັມແລະຫລອດສັກຢາ ໃນຄາບຣາມາຕາ

ຜູ້ຕ້ອງໂທດທີ່ຖືກໂທດແບບກັກຂັງເປັນລະຍະ (periodic detention orders) ທໍາການລາດຕະເວນ ເປັນປະຈໍາ ຕາມຖນົນ ແລະ ສະຖານທີ່ສາທາຣະນະ ໃນເຂດສູນການຄ້າຄາບຣາມາຕາ ແລະ ເຂດອ້ອມແອ້ມ ເພື່ອເກັບກວາດເອົາ ເຂັມສັກຢາທີ່ຖິ້ມຢູ່. ພາຍໃນລະຍະເວລາ 2 ປີ ຈາກວັນທີ 1 ເດືອນກໍຣະກະດາ (7) 2001 ຫາ ວັນທີ 30 ເດືອນ ມິຖຸນາ (6) 2003, ພວກຕ້ອງໂທດແບບເປັນລະຍະ ໄດ້ເກັບກວາດຫລອດສັກຢາແບບ ນຶ່ງມິລລີລິດໄດ້ເປັນຈໍານວນ ທັງໝົດ 25,277 ອັນ. ພວກຕ້ອງໂທດ ຍັງໄດ້ເກັບກວາດໄດ້ກັບໃສ່ຫລອດສັກຢາທີ່ຖືກຖິ້ມຕາມຖນົນນໍາ.

ບໍຣິການເກັບກວາດເຂັມສັກຢາທີ່ພວກຕ້ອງໂທດເປັນຜູ້ໃຫ້ນີ້ ເຮັດໃຫ້ສະພາບແວດລ້ອມປອດພັຍຂຶ້ນ ດ້ວຍການຫລຸດຜ່ອນທາງທີ່ໃຫ້ສະມາຊິກຂອງຊຸມຊົນອາດໄດ້ຮັບບາດເຈັບຍ້ອນຖືກເຂັມສັກຢາແທງ. ບໍຣິການທີ່ພວກຕ້ອງໂທດ ປະກອບນີ້ ຍັງເຮັດໃຫ້ຖນົນ ແລະ ສະຖານທີ່ສະທາຣະນະທັງຫລາຍໃນຄາບຣາມາຕາສະອາດຂຶ້ນ.

## ໂຄງການ ແຄມ ຄາບຣາມາຕາ

ເມື່ອເດືອນເມສາ (4) 1997 ກະຊວງນາຍົກ ຮ່ວມກັບ ເທສບານເມືອງແຟຣ໌ຟຽວດ໌ ແລະ ຫ້ອງການອື່ນໆ ໄດ້ພາກັນຈັດຕັ້ງໂຄງການ ແຄມຄາບຣາມາຕາ (Cabramatta Place Project) ຂຶ້ນ ເພື່ອຮັບມືກັບການໃຊ້ຢາເສບຕິດ ແລະ ຜົນກະທົບຂອງມັນຕໍ່ຊຸມຊົນຄາບຣາມາຕາ.

ໂຄງການ ແຄມຄາບຣາມາຕາ ເຮັດວຽກຕາມແຜນຕໍ່ຕ້ານຢາເສບຕິດໃນລະດັບທ້ອງຖິ່ນ. ນອກຈາກນີ້ ກໍຍັງໄດ້ສືບຕໍ່ເຣື່ອງອື່ນໆ ເຊັ່ນ ການເສີມຂຍາຍເຣື່ອງທ່ອງທ່ຽວ ແລະ ປັບປຸງເຣື່ອງຄວາມຈະເຣີນຫູຈະເຣີນຕາຂອງຕົວເມືອງ (ນໍາໂດຍເທສບານເມືອງແຟຣ໌ຟຽວດ໌) ແລະ ວຽກງານການສຶກສາ ແລະ ການຝຶກຫັດງານ ສໍາລັບຊາວໜຸ່ມ.

## ຂໍ້ມູນເພີ້ມຕື່ມ

### ຕ້ອງການຄວາມຊ່ວຍເຫລືອບໍ່?

ຖ້າທ່ານເອງ ຫລື ຄົນທີ່ທ່ານຮູ້ຈັກ, ຕ້ອງການຄວາມຊ່ວຍເຫລືອ ຫລື ຄໍາແນະນໍາ ຢ່າງເປັນຄວາມລັບ ກ່ຽວກັບຢາເສບຕິດ, ຈົ່ງໂທຣະສັບຫາ ບໍຣິການໃຫ້ຂໍ້ມູນກ່ຽວກັບເຫລົ້າແລະຢາເສບຕິດ **(Alcohol and Drug Information Service – ADIS)** ຕາມເບີ **9361 8000** (ພາຍໃນເຂດຕົວເມືອງຊິດນີ ເທົ່ານັ້ນ) ຫລື ຕາມເບີ ທີ່ບໍ່ຕ້ອງເສັຍຄ່າເບີ **1800 422 599** (ນອກຕົວເມືອງຊິດນີ). ADIS ເປີດຕລອດ 24 ຊົ່ວໂມງ, ໃຫ້ຄໍາແນະນໍາທີ່ເກັບເປັນຄວາມລັບ, ໃຫ້ຂໍ້ມູນ ແລະ ສົ່ງຕໍ່ໄປຫາຫ້ອງການທ້ອງຖິ່ນອື່ນໆ.

ໃນຖານະເປັນພໍ່ແມ່, ການຮັບມືກັບຢາເສບຕິດເປັນເຣື່ອງທີ່ທ້າທາຍຫລາຍທີ່ສຸດ. ຖ້າທ່ານຢາກໄດ້ຄໍາແນະນໍາວ່າຈະເວົ້າລົມກັບຄົນໜຸ່ມຢ່າງໃດກ່ຽວກັບເຣື່ອງການໃຊ້ຢາເສບຕິດ ຫລື ເຣື່ອງຄວາມປະພຶດ ຈົ່ງໂທຣະສັບຫາ **Parent Line** (ສາຍສໍາລັບພໍ່ແມ່) ໂດຍບໍ່ເສັຍຄ່າ ຕາມເບີ **13 20 55.**

### ແຈ້ງເຣື່ອງອາຊຍາກັມຢາເສບຕິດ

ຂໍ້ມູນໃດໆໃນເຣື່ອງອາຊຍາກັມກ່ຽວກັບຢາເສບຕິດທີ່ທ່ານມີ ເຖິງທ່ານຈະຄິດວ່າມັນບໍ່ສໍາຄັນ, ມັນອາດຈະຊ່ວຍໃຫ້ ຕໍາຣວດນໍາຈັບໄດ້. ເພື່ອແຈ້ງເຣື່ອງອາຊຍາກັມທີ່ກ່ຽວກັບຢາເສບຕິດ ຈົ່ງໂທຣະສັບຫາ ສາຍ **Crime Stoppers** (ຢຸດຢັ້ງອາຊຍາກັມ) ໂດຍບໍ່ເສັຍຄ່າ ເບີ **1800 333 000**.

### ຢາກຮູ້ຕື່ມບໍ່?

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ກ່ຽວກັບຕອບຖແລງເຣື່ອງບັນຫາຢາເສບຕິດຂອງຣັຖບານ ນຊວ ຈົ່ງເປີດ ອິນເຕີຣ໌ເນຕ ເບິ່ງ **www.druginfo.nsw.gov.au**